ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------:::::o0o:::::-----------

ສານປະຊາຊົນສູງສຸດ

ເລກທີ.147/ສປສສ

ນະຄອນຫຼວງວຽງຈັນ, ວັນທີ.໒໒.ສ.ສາ..2011

# ຄຳແນະນຳ

# ຂອງປະທານສານປະຊາຊົນສູງສຸດ

ເຖິງ: ບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ ແລະ ບັນດາປະທານສານປະຊາຊົນທ້ອງຖິ່ນທຸກຂັ້ນ ໃນທົ່ວປະເທດ

ເລື່ອງ: ບັນຫາກ່ຽວກັບການຂຽນຊື່ຂອງສານ ແລະ ການໃສ່ຕົວອັກສອນຫຍໍ້ຫຼັງເລກທີ ຂອງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ແລະ ເອກະສານອື່ນໆ ແລະ ຮ່າງໝາຍຮຽກຂອງໂຈດ, ບຸກຄົນທີສາມຝ່າຍໂຈດ ແລະ ຈຳເລີຍ

ອີງຕາມ ມາດຕາ 38 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2004;

ເພື່ອຮັບປະກັນ ໃນການຂຽນຊື່ຂອງສານ ແລະ ຄະນະສານ ພ້ອມທັງການໃສ່ຕົວອັກສອນຫຍໍ້ຫຼັງເລກທີ ຂອງເອກະສານຕ່າງໆ ທີ່ສານປະຊາຊົນ ແລະ ສານທະຫານ ໄດ້ອອກເພື່ອໃຫ້ເປັນເອກະພາບ ໃນທົ່ວປະເທດ.

ປະທານສານປະຊາຊົນສູງສຸດ ອອກຄຳແນະນຳດັ່ງນີ້:

1. ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຫຼື ເອກະສານອື່ນ ທີ່ສານອອກໃຫ້ຂຽນຊື່ສານ ແລະ ຕົວອັກສອນຫຍໍ້ຫຼັງເລກທີ ຕາມແບບຟອມທີ່ຂັດຕິດມາພ້ອມນີ້;
2. ຮ່າງໝາຍຮຽກຂອງໂຈດ, ຈຳເລີຍ, ພະຍານ ຫຼື ບຸກຄົນທີສາມຝ່າຍໂຈດ ແລະ ບຸກຄົນທີສາມຝ່າຍຈຳເລີຍ ແມ່ນໃຫ້ນຳໃຊ້ຕາມຮ່າງທີ່ຄັດຕິດມາພ້ອມນີ້ ແລະ ປ່ຽນແທນຮ່າງແບບເກົ່າ ສ່ວນເອກະສານອື່ນ ແມ່ນໃຫ້ນຳໃຊ້ຮ່າງສະບັບເກົ່າ ທີ່ໄດ້ອອກໄປກ່ອນແລ້ວນັ້ນ;
3. ເມື່ອບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ບັນດາປະທານສານປະຊາຊົນທ້ອງຖິ່ນ ໄດ້ຮັບຄຳແນະນຳສະບັບນີ້ແລ້ວ ໃຫ້ພວກທ່ານຈົ່ງນຳໄປເຜີຍ

ແຜ່ໃຫ້ບັນດາຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ວິຊາການ ທີ່ຂຶ້ນກັບສິດອຳນາດຂອງຕົນ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ຖ້າຫາກພົບບັນຫາໃດທີ່ຫຍຸ້ງຍາກ, ກໍໃຫ້ລາຍງານຄືນສານປະຊາຊົນສູງສຸດ ເພື່ອຈະຄົ້ນຄ້ວາພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ

ຄຳພັນ ສິດທິດຳພາ

ບ່ອນສົ່ງ:

- ໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອກວດກາ)
- ກະຊວງຍຸຕິທຳ 1 ສະບັບ (ເພື່ອຊາບ)
- ບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ ບ່ອນລະ 1 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ບັນດາປະທານສານປະຊາຊົນທ້ອງຖິ່ນທຸກຂັ້ນໃນທົ່ວປະເທດ ບ່ອນລະ 1 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ບັນດາກົມ ແລະ ສະຖາບັນຄົ້ນຄ້ວາ ແລະ ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອຊາບ)
- ສຳເນົາໄວ້ 2 ສະບັບ